# ພຶດຕິກຳ ແລະ ຄວາມເຕັມໃຈຈ່າຍໃນການເຂົ້າຊົມສະຖານທີ່ທ່ອງທ່ຽວມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ຂອງນັກທ່ອງທ່ຽວຕ່າງຊາດ

# Behavior and willingness to pay of foreign tourists for the fee to visit the Vat Phou Champasak World Heritage

ໜູໄກ ສີຫາເທບ[1] ວອນວະໄລ ອິນບຸນມີ [2] ຈັນທະສອນ ວັນນະວົງ[3]ໂສວັດ ຄຳພູວັນ[4]
Noukai Sihathep Vonvalay Inbounmy Chanthasone Vannavong
and Sovat Khamphouvan

**Abstract**

This study is study of Behavior and Willingness to pay for the fee to visit Vat Phou Champasack World Heritage of Foreign tourists, Evaluated the Willingness to pay of the foreign tourists for the fee to visit by Contingent Value Method ( CVM ) by Payment Card Technique ( PC )

The result revealed that: The impression level after visiting Vat Phou Champasak of Asian tourists at different levels by the Asian tourists' impression level is higher than Asian tourists, in terms of willingness to pay a visit to Vat Phou Champasak of the non-Asian tourists are willing to spend more than tourists from Asia is US$ 6.10 per US$ 5.75

Test result of personal and behavior factors of tourists who visit the Vat Phou Champasak to willingness to pay a fee to visit as factors of individual age, occupation and income are different to the willingness to pay a fee to visit Vat Phou Champasak while factors of gender and education of both groups are willing to pay a fee to visit Vat Phou Champasak differently, For the behavior factors that included the inheritance and other destinies in the traveling to the willingness to pay to visit of both tourists are different, Otherwise the factors of tourism experience in others Heritage, the main purpose of visiting and time using to visit Vat Phou to the willingness to pay a fee to visit are no different.

Keywords: Behavior / willingness to pay / Vat Phou Champasak World Heritage

**ບົດຄັດຫຍໍ້**

ການວິໄຈຄັ້ງນີ້ ມີຈຸດປະສົງເພື່ອສຶກສາພຶດຕິກຳ ແລະ ລະດັບຄວາມເຕັມໃຈຈ່າຍຄ່າທຳນຽມໃນການເຂົ້າຊົມສະຖານທີ່ທ່ອງທ່ຽວ ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ຂອງນັກທ່ອງທ່ຽວຊາວຕ່າງຊາດ, ເຮັດການປະເມີນ

[1] ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ
Faculty of Economics and Management at Champasak Uniiversity.Corresponding author: Tel. 020 22228168
E-mailaddress: nou999sihathep@nmail.com
[2] ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ
[3] ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ
[4] ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ

ຄວາມເຕັມໃຈຈ່າຍຄ່າທຳນຽມການເຂົ້າຊົມ ໂດຍວິທີການປະເມີນຄ່າໂດຍກົງຈາກການສຳພາດນັກທ່ອງທ່ຽວ (Contingent Value Method / CVM) ດ້ວຍເຕັກນິກການໃຊ້ບັດຈ່າຍເງິນ (Payment Card Techniques/PC)

ຜົນການວິໄຈເຫັນວ່າ ລະດັບຄວາມປະທັບໃຈພາຍຫຼັງການທ່ຽວຊົມວັດພູຈຳປາສັກຂອງນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີມີຄວາມປະທັບໃຈຫຼາຍກວ່ານັກທ່ອງທ່ຽວຊາວອາຊີ, ໃນດ້ານຂອງຄວາມເຕັມໃຈຈ່າຍຄ່າເຂົ້າຊົມວັດພູຈຳປາສັກ ຂອງນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີຈະມີຄວາມຍິນດີຈ່າຍຫຼາຍກວ່ານັກທ່ອງທ່ຽວຊາວອາຊີ ຄື 6.10 ຕໍ່ 5.75 ໂດລາສະຫະລັດ, ຜົນການທົດສອບປັດໄຈສ່ວນບຸກຄົນ ແລະ ປັດໄຈດ້ານພຶດຕິກຳຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມ ເຫັນວ່າ: ປັດໄຈສ່ວນບຸກຄົນດ້ານອາຍຸ, ອາຊີບ ແລະ ລາຍໄດ້ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນມີຄວາມແຕກຕ່າງກັນ, ຂະນະທີ່ປັດໄຈດ້ານເພດ ແລະ ລະດັບການສຶກສາຂອງທັງສອງກຸ່ມ ແມ່ນມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກບໍ່ແຕກຕ່າງກັນ, ສຳລັບປັດໄຈດ້ານພຶດຕິກຳ ເຫັນວ່າ ປັດໄຈດ້ານຄວາມເປັນມໍລະດົກໂລກ ແລະ ຈຸດໝາຍປາຍທາງອື່ນໃນການເດີນທາງທ່ອງທ່ຽວ ຕໍ່ກັບຄວາມເຕັມໃຈຈ່າຍໃນການເຂົ້າຊົມຂອງທັງສອງກຸ່ມນັກທ່ອງທ່ຽວແມ່ນມີຄວາມແຕກຕ່າງກັນ, ສ່ວນປັດໄຈພຶດຕິກຳດ້ານປະສົບການທ່ອງທ່ຽວແຫຼ່ງມໍລະດົກໂລກອື່ນ, ຈຸດປະສົງຫຼັກໃນການມາທ່ອງທ່ຽວ ແລະ ເວລາທີ່ໃຊ້ໃນການທ່ອງທ່ຽວວັດພູ ຕໍ່ກັບຄວາມເຕັມໃຈຈ່າຍໃນການເຂົ້າຊົມໃນພາບລວມ ແມ່ນບໍ່ມີຄວາມແຕກຕ່າງກັນ.

ຄຳສຳຄັນ: ພຶດຕິກຳ/ຄວາມເຕັມໃຈຈ່າຍ/ສະຖານທີ່ທ່ອງທ່ຽວມໍລະດົກໂລກຜາສາດຫີນວັດພູຈຳປາສັກ

**ພາກສະເໜີ**

ສປປ ລາວ ເປັນປະເທດທີ່ມີສະຖານທີ່ທ່ອງທ່ຽວທີ່ມີຄວາມຫຼາກຫຼາຍ, ມີທັງປະຫວັດສາດ, ວັດທະນະ ທຳ ແລະ ທຳມະຊາດທີ່ລືຊື່ ແລະ ໄດ້ກາຍເປັນສິ່ງສັນດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດໃຫ້ເຂົ້າມາທ່ຽວຊົມຢ່າງບໍ່ຂາດສາຍ. ນັບແຕ່ປີ 1990 ເຖິງ 2012 ຈຳນວນນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ມີອັດຕາເພີ່ມຂຶ້ນສະເລ່ຍ 20.36% ຕໍ່ປີ ຄືປີ 1990 ມີນັກທ່ອງທ່ຽວເຂົ້າມາປະເທດເຮົາພຽງແຕ່ 14,400 ຄົນ, ໃນປີ 2000 ມີນັກທ່ອງທ່ຽວເຂົ້າມາ 737,208 ຄົນ, ສ້າງລາຍຮັບໄດ້ 113.89 ລ້ານໂດລາສະຫະລັດ ຫຼື ປະມານ 900 ຕື້ກີບ, ປີ 2005 ມີ 899,273 ຄົນ ແລະ ປີ 2012 ມີນັກທ່ອງທ່ຽວເຖິງ 3,330,072 ຄົນ, ສ້າງລາຍຮັບໄດ້ 513.57 ລ້ານໂດລາ ຫຼື ປະມານ 4 ພັນຕື້ກີບ ແລະ ຈຳນວນບໍລິສັດທ່ອງທ່ຽວກໍ່ເພີ່ມຂຶ້ນ ປີ 1989 ມີພຽງບໍລິສັດດຽວ ຮອດປີ 2005 ມີ 64 ບໍລິສັດ, ປີ 2008 ເພີ່ມຂຶ້ນເປັນ 143 ບໍລິສັດ, ປີ 2011 ມີເຖິງ 236 ບໍລິສັດ ແລະ ຈຳນວນໂຮງແຮມ ແລະ ເຮືອນພັກ ກໍ່ມີການຂະຫຍາຍຕົວເພີ່ມຂຶ້ນເຊັ່ນດຽວກັນ ຄືປີ 2005 ມີ 1,088 ແຫ່ງ, ຈຳນວນຫ້ອງນອນ 15,828 ຫ້ອງ, ປີ 2011 ມີ 2,473 ແຫ່ງ ຈຳນວນຫ້ອງນອນມີ 38,001 ຫ້ອງ, ຈຳນວນແຫຼ່ງທ່ອງທ່ຽວໃນທົ່ວປະເທດມີ 1,493 ແຫ່ງ ໃນນັ້ນແຫຼ່ງທ່ອງທ່ຽວທຳມະຊາດມີ 849 ແຫ່ງ ແຫຼ່ງທ່ອງທ່ຽວວັດທະນະທຳມີ 435 ແຫ່ງ ແລະ ແຫຼ່ງທ່ອງທ່ຽວດ້ານປະຫວັດສາດມີ 209 ແຫ່ງ ໄດ້ສຳຫຼວດແລ້ວ 141 ແຫ່ງ ກຳລັງສຳຫຼວດ 230 ແຫ່ງ ຍັງບໍ່ທັນສຳຫຼວດ 496 ແຫ່ງ ແລະ ເປີດບໍລິການນຳໃຊ້ແລ້ວ 626 ແຫ່ງ ເຊິ່ງໃນນັ້ນໄດ້ມີການສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວຮ່ວມກັບບັນດາແຂວງໄດ້ 16 ແຫ່ງ ແລະ ໄດ້ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວເມືອງອີກຈຳນວນ 17 ແຫ່ງ.... ( ໜັງສືພິມວຽງຈັນໃໝ່: ແຫຼ່ງທ່ອງທ່ຽວມີບົດບາດໃນການພັດທະນາເສດຖະກິດ 26/04/2003 (ອອນໄລ), ເຂົ້າເຖິງຈາກ: http://www.vientianemai.net/teen /khao/1/9190. ຄົ້ນພົບເມື່ອວັນທີ: 15/03/2014

ສະເພາະແຂວງຈຳປາສັກນັ້ນ ໄດ້ຖືວ່າເປັນແມ່ແຮງດຶງດູດອັນສຳຄັນໃນການທ່ອງທ່ຽວຂອງບັນດາແຂວງພາກໄຕ້ ຍ້ອນມີແຫຼ່ງທ່ອງທ່ຽວທີ່ມີຄວາມສວຍງາມ ແລະ ຫຼາກຫຼາຍ ແລະ ຍັງກາຍເປັນຈຸດເຊື່ອມຕໍ່ກັບແຂວງ ສາລະວັນ, ອັດຕະປື, ເຊກອງ ແລະ ປະເທດອ້ອມຂ້າງອີກດ້ວຍ. ເຊິ່ງປະຈຸບັນນີ້ ແຂວງຈຳປາສັກມີແຫຼ່ງທ່ອງທ່ຽວທັງໝົດຈຳນວນ

206 ແຫ່ງ, ທຳມະຊາດ 109 ແຫ່ງ, ວັດທະນະທຳ 57 ແຫ່ງ, ປະຫວັດສາດ 40 ແຫ່ງ ( ອ້າງຈາກ ແຜນຍຸດທະສາດການທ່ອງທ່ຽວແຂວງຈຳປາສັກ 2011-2020 ໜ້າ 21 ) ເຊິ່ງບັນດາແຫຼ່ງທ່ອງທ່ຽວທີ່ມີຊື່ສຽງ ແລະ ສ້າງຄວາມດຶງດູດນັກທ່ອງທ່ຽວໄດ້ດີ ກໍ່ຈະກະຈັດກະຈາຍຕາມບັນດາເມືອງຕ່າງໆ ເປັນຕົ້ນແມ່ນ ເມືອງປາກຊ່ອງ ເຊິ່ງມີຊື່ສຽງທາງດ້ານການທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳບັນດາເຜົ່າ, ເມືອງໂຂງ ກໍ່ມີແຫຼ່ງທ່ອງທ່ຽວທີ່ຂຶ້ນຊື່ລືຊາ ໃນນາມ ມະຫານະທີ ສີພັນດອນ ແລະ ເມືອງຈຳປາສັກ ກໍ່ມີຊື່ສຽງທາງດ້ານປະຫວັດສາດ ບູຮານສະຖານ ທີ່ເປັນມໍລະດົກໂລກ ເປັນຕົ້ນແມ່ນຄືເມືອງຈຳປາສັກ ແລະ ຜາສາດຫີນວັດພູຈຳປາສັກນັ້ນເອງ. ໂດຍຈາກການຂຶ້ນທະບຽນເປັນມໍລະດົກໂລກໃນຮູບແບບບູຮານສະຖານທີ່ມີຄວາມເປັນມາ ແລະ ມີສະຖາປັດຕະຍາກຳທີ່ສວຍສົດງົດງາມ ຜາສາດຫີນວັດພູຈຳ ປາສັກ ໄດ້ກາຍເປັນສະຖານທີ່ທ່ອງທ່ຽວທີ່ເຮັດໃຫ້ທັງຄົນລາວ ແລະ ຊາວຕ່າງຊາດພາກັນຫຼັ່ງໄຫຼເຂົ້າມາທ່ຽວຊົມເປັນຈຳນວນຫຼວງຫຼາຍໃນແຕ່ລະປີ ແລະ ໄດ້ສ້າງລາຍຮັບຈຳນວນມະຫາສານໃນການອະນຸລັກ, ພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍ່ຄືເມືອງນັ້ນເອງ...

ສະຖານທີ່ມໍລະດົກໂລກຜາສາດຫີນວັດພູຈຳປາສັກນັ້ນ ໄດ້ເປີດໃຫ້ບໍລິການ ແກ່ນັກທ່ອງທ່ຽວຕັ້ງແຕ່ເວລາ 8:00 ຫາ ເວລາ 16:30 ແລະ ມີຄ່າທຳນຽມການເຂົ້າທ່ຽວຊົມ ຄົນລາວ 3,000 ກີບ ແລະ ຄົນຕ່າງຊາດ 30,000 ກີບ ໂດຍອັດຕາລາຄານີ້ ເປັນລາຄາເດີມຕັ້ງແຕ່ເປີດໃຫ້ບໍລິການທ່ຽວຊົມສະຖານທີ່ມໍລະດົກໂລກ ຜາສາດຫີນວັດພູ ຈຳປາສັກ ແລະ ໃນປີ 2012 ເປັນຕົ້ນມາ ສະຖານທີ່ດັ່ງກ່າວທາງພາກລັດໄດ້ເປີດໃຫ້ເອກະຊົນເຂົ້າມາສຳປະທານ ເລື່ອງການເກັບຄ່າທຳນຽມການເຂົ້າຊົມ ແລະ ຜູ້ສຳປະທານກໍ່ໄດ້ຈັດໃຫ້ມີການບໍລິການເພີ່ມເຕີມແກ່ນັກທ່ອງທ່ຽວ ໃນການຂຶ້ນໄປຜາສາດຫີນວັດພູ ໂດຍຈັດບໍລິການລົດນຳສົ່ງ ໃນອັດຕາ 15,000 ກີບ ທັງຄົນລາວ ແລະ ຊາວຕ່າງຊາດ....

ໂດຍການວິໄຈນີ້ເປັນການປະເມີນສັກກະຍະພາບ ແລະ ຂີດຄວາມສາມາດໃນການຫາວິທີທາງເພີ່ມມູນຄ່າ ແລະ ການວາງແຜນຍຸດທະສາດດ້ານການທ່ອງທ່ຽວລະຫວ່າງປະເທດຂອງແຂວງຈຳປາສັກ ເຊິ່ງຜູ້ວິໄຈໄດ້ສຶກສາພຶດຕິກຳ ແລະ ຄວາມເຕັມໃຈທີ່ຈະຈ່າຍຄ່າທຳນຽມຂອງນັກທ່ອງທ່ຽວຊາວຕ່າງຊາດທີ່ເຂົ້າມາທ່ຽວສະຖານທີ່ມໍລະດົກໂລກ ຜາສາດຫີນວັດພູ ຈຳປາສັກ.

ຈຸດປະສົງຂອງການສຶກສາ

1. ເພື່ອສຶກສາພຶດຕິກຳຂອງນັກທ່ອງທ່ຽວຊາວຕ່າງຊາດ ທີ່ເດີນທາງເຂົ້າມາທ່ຽວຊົມສະຖານທີ່ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ 2. ເພື່ອສຶກສາລະດັບຄວາມເຕັມໃຈຈ່າຍຄ່າທຳນຽມໃນການເຂົ້າຊົມສະຖານທີ່ທ່ອງທ່ຽວມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ຂອງນັກທ່ອງທ່ຽວຊາວຕ່າງຊາດ

ສົມມຸດຖານ

1. ນັກທ່ອງທ່ຽວ ຊາວອາຊີ ແລະ ບໍ່ແມ່ນຊາວອາຊີຈະມີພຶດຕິກຳໃນລົດນິຍົມ ແລະ ຈຸດປະສົງຂອງການເດີນທາງບໍ່ຄືກັນ
2. ນັກທ່ອງທ່ຽວຊາວອາຊີ ຈະມີເວລາໃນການທ່ຽວຊົມຫຼາຍກວ່ານັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ
3. ການຕັດສິນໃຈເລືອກຂອງນັກທ່ອງທ່ຽວທັງອາຊີ ແລະ ບໍ່ແມ່ນອາຊີ ໃນການມາທ່ຽວວັດພູ ຍ້ອນວ່າເປັນມໍລະດົກໂລກ
4. ລະດັບຄວາມປະທັບໃຈໃນການທ່ຽວຊົມແຫຼ່ງທ່ອງທ່ຽວມໍລະດົກໂລກ ຜາສາດຫີນວັດພູ ຂອງນັກທ່ອງທ່ຽວຊາວອາຊີ ແລະ ບໍ່ແມ່ນອາຊີ ມີລະດັບທີ່ໃກ້ຄຽງກັນ
5. ນັກທ່ອງທ່ຽວຊາວອາຊີ ຈະມີຄວາມເຕັມໃຈຈ່າຍໃນມູນຄ່າຕ່ຳກວ່າ ນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ
6. ປັດໄຈສ່ວນບຸກຄົນ ແລະ ພຶດຕິກຳທີ່ແຕກຕ່າງກັນຂອງນັກທ່ອງທ່ຽວຈະມີຜົນຕໍ່ຄວາມເຕັມໃຈຈ່າຍແຕກຕ່າງກັນ

## ອຸປະກອນ ແລະ ວິທີການ

### *ຂອບເຂດຂອງການສຶກສາ*

ໃນການສຶກສາຄັ້ງນີ້ແມ່ນສຶກສາພຶດຕິກຳຂອງນັກທ່ອງທ່ຽວຊາວຕ່າງຊາດ ທີ່ເດີນທາງເຂົ້າມາທ່ຽວຊົມສະ ຖານທີ່ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ໃນສົກປີ 2015-2016, ສຳລັບກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຈະເກັບຂໍ້ມູນຈາກນັກທ່ອງທ່ຽວຊາວຕ່າງຊາດ.

### *ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ຈະໃຊ້ໃນການຄົ້ນຄວ້າວິໄຈຄັ້ງນີ້ ຄືນັກທ່ອງທ່ຽວຊາວຕ່າງຊາດ ທີ່ເດີນທາງມາທ່ອງທ່ຽວສະຖານທີ່ມໍລະດົກໂລກປະສາດຫີນວັດພູ ຈຳປາສັກ ເຊິ່ງຕົວເລກດັ່ງກ່າວຈະເປັນການຄິດໄລ່ໂດຍສະເລ່ຍຕໍ່ປີ ຂອງນັກທ່ອງທ່ຽວຕ່າງຊາດແຕ່ປີ 2009-2013 ເຊິ່ງມີຕົວເລກສະເລ່ຍຂອງນັກທ່ອງທ່ຽວຊາວຕ່າງຊາດຈຳນວນ 44,636 ຄົນ ແລະ ໄດ້ນຳໃຊ້ສູດການຄິດໄລ່ຂອງ Taro Yamane (1976) ໃນການຄິດໄລ່ກຸ່ມຕົວຢ່າງເຊິ່ງໄດ້ຈຳນວນ 396 ຕົວຢ່າງ ແຕ່ຜູ້ວິໄຈໄດ້ນຳໃຊ້ 500 ຕົວຢ່າງເພື່ອຄວາມແນ່ນອນທາງສະຖິຕິ.

### *ວິທີການເກັບກຳຂໍ້ມູນ*

ໃນການລົງເກັບກຳຂໍ້ມູນນີ້ ແມ່ນໄດ້ລົງເກັບກຳຈາກນັກທ່ອງທ່ຽວຊາວຕ່າງຊາດທີ່ເດີນທາງມາທ່ອງທ່ຽວສະຖານທີ່ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ໂດຍການແຈກຢາຍ ແລະ ສຳພາດນັກທ່ອງທ່ຽວໂດຍກົງ ໃນຂະນະທີ່ນັກທ່ອງທ່ຽວກຳລັງຈະກັບຈາກການທ່ຽວຊົມ ເພາະເຮົາຈະໄດ້ຂໍ້ມູນທີ່ເກີດຂຶ້ນຫຼັງຈາກການທ່ຽວຊົມວ່າ ຈຳນວນເງິນທີ່ເຂົາເຈົ້າຈ່າຍໄປນັ້ນ ມີຄວາມໃກ້ຄຽງກັບສິ່ງທີ່ໄດ້ຮັບຈາກການທ່ຽວຊົມນັ້ນ ຫຼື ບໍ່ ? ເຊິ່ງໄດ້ແຈກຢາຍ ແລະ ສຳພາດນັກທ່ອງທ່ຽວທັງໝົດຈຳນວນ 500 ສະບັບ ແລະ ສາມາດເກັບໄດ້ຄືນຕົວຈິງຈຳນວນ 460 ສະບັບ ແຕ່ສາມາດໃຊ້ໄດ້ພຽງຈຳນວນ 451 ສະບັບ ເນື່ອງຈາກວ່າບາງສະບັບບໍ່ມີຄວາມສົມບູນ.

### *ເຄື່ອງມືທີ່ໃຊ້ໃນການສຶກສາ*

ໃນການສຶກສານີ້ ແມ່ນນຳໃຊ້ແບບສອບຖາມເປັນເຄື່ອງມືໃນການເກັບຂໍ້ມູນ ເຊິ່ງແບ່ງອອກເປັນ 3 ສ່ວນຄື:

- ພາກສ່ວນທີ່ເປັນຂໍ້ມູນທົ່ວໄປຂອງນັກທ່ອງທ່ຽວຊາວຕ່າງຊາດ ເຊິ່ງໄດ້ແກ່: ເພດ, ອາຍຸ, ສະຖານະພາບ, ການສຶກສາ, ອາຊີບ, ລາຍໄດ້ຕໍ່ເດືອນ ແລະ ປະເພດຂອງນັກທ່ອງທ່ຽວ
- ພາກສ່ວນຂໍ້ມູນດ້ານພຶດຕິກຳຂອງນັກທ່ອງທ່ຽວຊາວຕ່າງຊາດເຊິ່ງໄດ້ແກ່: ຄວາມນິຍົມໃນຮູບແບບການ ທ່ອງທ່ຽວ, ຈຸດປະສົງການເດີນທາງທ່ອງທ່ຽວ, ໄລຍະເວລາທີ່ໃຊ້ໃນການທ່ອງທ່ຽວ, ປັດໃຈການເປັນມໍລະດົກໂລກ, ຈຸດປະສົງຫຼັກການມາທີ່ຜາສາດຫີນວັດພູ, ແຫຼ່ງຂໍ້ມູນທີ່ໃຊ້ໃນການຕັດສິນໃຈມາທ່ຽວ, ລັກສະນະການທ່ອງທ່ຽວ, ຮູບແບບການທ່ອງທ່ຽວ, ຄວາມເພິ່ງພໍໃຈຫຼັງການທ່ຽວຊົມ, ຈຳນວນຈຸດໝາຍປາຍທາງອື່ນ
- ມູນຄ່າຄວາມຍິນດີທີ່ຈະຈ່າຍ ຄ່າທຳນຽມການເຂົ້າຊົມສະຖານທີ່ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ຂອງນັກທ່ອງທ່ຽວຊາວຕ່າງຊາດ ໃນການເຂົ້າທ່ຽວຊົມສະຖານທີ່ທ່ອງທ່ຽວ ໂດຍນຳໃຊ້ເຕັກນິກບັດຈ່າຍເງິນ (Payment Card Techniques/PC). ເພາະຂໍ້ມູນຈະມີຄ່າຄວາມຄາດເຄື່ອນຕ່ຳກວ່າວິທີການອື່ນ.

*ວິທີການວິເຄາະຂໍ້ມູນ*

ໃນການສຶກສາພຶດຕິກຳ ແລະ ຄວາມເຕັມໃຈຈ່າຍຂອງນັກທ່ອງທ່ຽວຊາວຕ່າງຊາດທີ່ເຂົ້າມາທ່ອງທ່ຽວສະຖານທີ່ທ່ອງທ່ຽວມໍລະດົກໂລກ ຜາສາດຫີນວັດພູ ຈຳປາສັກ ໂດຍໃນສ່ວນຂໍ້ມູນທົ່ວໄປ ແລະ ພຶດຕິກຳນັກທ່ອງທ່ຽວນັ້ນເປັນຕົ້ນ ແມ່ນເພດ, ອາຍຸ, ສະຖານະພາບ, ການສຶກສາ, ອາຊີບ, ລາຍໄດ້ຕໍ່ເດືອນ ແລະ ປະເທດເປັນຕົ້ນ ແລະ ພຶດຕິກຳຂອງນັກທ່ອງທ່ຽວຊາວຕ່າງຊາດໃນດ້ານຄວາມນິຍົມໃນຮູບແບບການທ່ອງທ່ຽວ, ຈຸດປະສົງການເດີນທາງທ່ອງທ່ຽວ , ໄລຍະເວລາທີ່ໃຊ້ໃນການທ່ອງທ່ຽວ, ປັດໄຈການເປັນມໍລະດົກໂລກ, ຈຸດປະສົງຫຼັກການມາທີ່ຜາສາດຫີນວັດພູ, ແຫຼ່ງຂໍ້ມູນທີ່ໃຊ້ໃນການຕັດສິນໃຈມາທ່ຽວ, ລັກສະນະການທ່ອງທ່ຽວ, ຮູບແບບການທ່ອງທ່ຽວ, ຄວາມເພິ່ງພໍໃຈຫຼັງການທ່ຽວຊົມ, ຈຳນວນຈຸດໝາຍປາຍທາງອື່ນ ຈະໄດ້ວິເຄາະໃນແບບຄວາມຖີ່ ແລະ ສ່ວນຮ້ອຍ.

ສ່ວນການປະເມີນຄວາມເຕັມໃຈຈ່າຍຄ່າທຳນຽມການເຂົ້າຊົມຂອງນັກທ່ອງທ່ຽວຊາວຕ່າງຊາດນັ້ນ ເຮັດການວິເຄາະໂດຍວິທີການປະເມີນຄ່າໂດຍກົງຈາກການສຳພາດນັກທ່ອງທ່ຽວ (Contingent Value Method /CVM) ດ້ວຍເຕັກນິກການໃຊ້ບັດຈ່າຍເງິນ (Payment Card Techniques/PC). ເຊິ່ງມີຂໍ້ດີຄື ສາມາດຫຼຸດຄວາມຄາດເຄື່ອນທີ່ໄດ້ຈິງຕ່ຳລົງ ແລະ ເຮັດການປຽບທຽບມູນຄ່າຄວາມຍິນດີທີ່ຈະຈ່າຍສະເລ່ຍ (Compare means) ໃນແຕ່ລະກຸ່ມຂອງຕົວປ່ຽນດ້ວຍວິທີການທົດສອບທາງສະຖິຕິ T-Test simple for means ແລະ F-test ຫຼື One-Way ANOVA.

**ຜົນ ແລະ ວິຈານຜົນ**

*ສ່ວນທີ 1 ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ*

ຈາກການສຶກສາພົບວ່າກຸ່ມຕົວຢ່າງສ່ວນໃຫຍ່ໂດຍລວມເປັນເພດຊາຍ ຄິດເປັນ 51.88 % ໃນນັ້ນມາຈາກອາຊີ 23.28 %, ອາຍຸສ່ວນຫຼາຍແມ່ນຢູ່ໃນເກນລະຫວ່າງ 20-30 ປີ ໂດຍລວມ 35.92 % ໃນນັ້ນເປັນຊາວອາຊີ 11.53 %, ມີສະຖານະພາບໂດຍລວມແມ່ນເປັນກຸ່ມຄົນໂສດ 72.50 % ໃນນັ້ນມີຊາວອາຊີ 36.59 %, ສ່ວນຫຼາຍແມ່ນນັກສຶກສາ 46.12 % ໃນນັ້ນເປັນຊາວອາຊີ 31.49 %, ສ່ວນດ້ານລາຍໄດ້ສະເລ່ຍຕໍ່ເດືອນສ່ວນຫຼາຍແມ່ນ ຕ່ຳກວ່າ 1,000 ໂດລາ 58.09 % ໃນນັ້ນເປັນຊາວອາຊີ 33.26 % ແລະ ມີລະດັບການສຶກສາ ລະດັບປະລິນຍາຕີ 44.79 % ໃນນັ້ນອາຊີ 31.26 %

*ສ່ວນທີ 2 ຜົນການວິເຄາະພຶດຕິກຳຂອງນັກທ່ອງທ່ຽວ*

ຄວາມນິຍົມຮູບແບບການທ່ອງທ່ຽວ ສ່ວນໃຫຍ່ມັກການທ່ອງທ່ຽວທາງທຳມະຊາດ 66.74 % ໃນນັ້ນມີນັກທ່ອງທ່ຽວອາຊີໃນສັດສ່ວນ 27.94 % ວັດຖຸປະສົງຫຼັກຂອງການທ່ອງທ່ຽວສ່ວນໃຫຍ່ແມ່ນເພື່ອພັກຜ່ອນ 55.43 % ໃນນັ້ນນັກທ່ອງທ່ຽວອາຊີ ມີ 14.41 % ແລະ ມີໄລຍະເວລາໃນການພັກຢູ່ແຂວງຈຳປາສັກ 1-3 ວັນ ກວມ 49.67 % ໂດຍນັກທ່ອງທ່ຽວອາຊີ ໃຊ້ເວລາພັກຢູ່ແຂວງຈຳປາສັກ 4-6 ວັນ ກວມ 20.84 % ສ່ວນໃຫຍ່ ເລືອກເຂົ້າພັກໃນໂຮງແຮມ 50.78 %, ໃນນັ້ນນັກທ່ອງທ່ຽວອາຊີສ່ວນໃຫຍ່ເລືອກທີ່ຈະເຂົ້າພັກຢູ່ໂຮງແຮມ 29.93 % ຂະນະທີ່ໃນດ້ານປະສົບການໃນການເດີນທາງໄປແຫຼ່ງທ່ອງທ່ຽວມໍລະດົກໂລກ ພົບວ່າ ສ່ວນໃຫຍ່ແມ່ນບໍ່ເຄີຍໄປມາກ່ອນ 67.41 % ແລະ ໃຫ້ເຫດຜົນໃນການເດີນທາງມາທ່ຽວວັດພູຈຳປາສັກຍ້ອນວ່າວັດພູຈຳປາສັກເປັນແຫຼ່ງທ່ອງທ່ຽວມໍລະດົກໂລກ ຊຶ່ງພົບວ່າ ມີຄວາມເຫັນດີຕໍ່ເຫດຜົນດັ່ງກ່າວຢູ່ໃນລະດັບປານກາງ ($\bar{X}$=3.59, SD=0.70) ໃນນັ້ນນັກທ່ອງທ່ຽວອາຊີມີຄວາມຄິດເຫັນດີຢູ່ໃນລະດັບປານກາງ ($\bar{X}$=3.41, SD=0.65) ສ່ວນນັກທ່ອງທ່ຽວທີ່ບໍ່ແມ່ນອາຊີມີຄວາມຄິດເຫັນດີຢູ່ໃນລະດັບຫຼາຍ ($\bar{X}$=3.73, SD=0.71) ແລະ ໃຫ້ເຫດຜົນໃນການເດີນທາງມາຢ້ຽມຊົມວັດພູຈຳປາສັກ ເພື່ອການສຶກສາຮຽນຮູ້ 66.30 % ແລະໃນນັ້ນ ມີນັກທ່ອງທ່ຽວອາຊີ 32.59 % ແລະ ຮັບຮູ້ຂ່າວສານຈາກວາລະສານການທ່ອງທ່ຽວ 28.52 % ເປັນຫຼັກ ໂດຍໃນນັ້ນນັກທ່ອງທ່ຽວອາຊີທີ່ຮັບຮູ້ຂໍ້ມູນຈາກຊ່ອງທາງນີ້ມີພຽງ 5.67 % ເພາະ

ສ່ວນຫຼາຍຮັບຮູ້ຂໍ້ມູນຈາກເວັບໄຊກວມ 19.01 % ແລະ ນິຍົມເດີນທາງກັບໝູ່ເພື່ອນ 54.77 % ທັງນັກທ່ອງທ່ຽວອາຊີ ແລະ ບໍ່ແມ່ນອາຊີ. ເຊິ່ງຮູບແບບການເດີນທາງທີ່ເລືອກໃຊ້ເດີນທາງທ່ຽວຊົມພາຍໃນວັດພູ ຈະໃຊ້ການເດີນທ່ຽວຊົມ ກວມ 32.37 % ໃນຂະນະທີ່ການໃຊ້ເວລາໃນການທ່ຽວຊົມວັດພູຈຳປາສັກ ໂດຍລວມ ພົບວ່າສ່ວນໃຫຍ່ໃຊ້ເວລາໃນການທ່ຽວຊົມວັດພູຈຳປາສັກ ຈຳນວນ 1-2 ຊົ່ວໂມງ ກວມເອົາ 67.85 %, ໃນນັ້ນ ນັກທ່ອງທ່ຽວອາຊີສ່ວນໃຫຍ່ໃຊ້ເວລາໃນການທ່ຽວຊົມວັດພູຈຳປາສັກ ຈຳນວນ 1-2 ຊົ່ວໂມງ 36.14 % ແລະ ພາຍຫຼັງການທ່ຽວຊົມເຫັນວ່ານັກທ່ອງທ່ຽວມີຄວາມເພິ່ງພໍໃຈ ໂດຍລວມຢູ່ໃນລະດັບຫຼາຍ ($\overline{X}$=3.59, SD=0.81) ໃນນັ້ນນັກທ່ອງທ່ຽວອາຊີມີຄວາມເພິ່ງພໍໃຈ ຢູ່ໃນລະດັບປານກາງ ($\overline{X}$=3.31, SD=0.67) ສ່ວນນັກທ່ອງທ່ຽວທີ່ບໍ່ແມ່ນອາຊີມີຄວາມເພິ່ງພໍໃຈ ຢູ່ໃນລະດັບຫຼາຍ ($\overline{X}$=3.81, SD=0.84) ພ້ອມກັນນັ້ນນັກທ່ອງທ່ຽວຍັງບອກວ່າຫຼັງຈາກການທ່ຽວຊົມວັດພູແລ້ວພວກເຂົາສ່ວນໃຫຍ່ຈະພາກັນເດີນທາງໄປທ່ຽວຊົມ ພູພຽງບໍລະເວນ (ນ້ຳຕົກ ແລະ ສວນກາເຟ) ກວມ 42.35 %,ໃນນັ້ນ ນັກທ່ອງທ່ຽວອາຊີສ່ວນໃຫຍ່ວາງແຜນວ່າຈະໄປທ່ຽວພູພຽງບໍລະເວນ ( ນ້ຳຕົກ ແລະ ສວນກາເຟ) 27.27 %

*ສ່ວນທີ 3 ວິເຄາະມູນຄ່າຄວາມເຕັມໃຈຈ່າຍຄ່າເຂົ້າຊົມວັດພູຈຳປາສັກຂອງນັກທ່ອງທ່ຽວ*

ຕາຕະລາງ 1 ມູນຄ່າຄວາມເຕັມໃຈຈ່າຍຄ່າເຂົ້າຊົມວັດພູຈຳປາສັກຂອງນັກທ່ອງທ່ຽວຕ່າງຊາດ

| ມູນຄ່າຄວາມພໍໃຈຈ່າຍ | ອາຊີ | | ບໍ່ແມ່ນອາຊີ | | ລວມ | |
|---|---|---|---|---|---|---|
| ລາຍການ | ຄວາມຖີ່ | ສ່ວນຮ້ອຍ | ຄວາມຖີ່ | ສ່ວນຮ້ອຍ | ຄວາມຖີ່ | ສ່ວນຮ້ອຍ |
| ບໍ່ພໍໃຈຈ່າຍ | 1 | 0.22 | 14 | 3.10 | 15 | 3.33 |
| ພໍໃຈຈ່າຍໃນມູນຄ່າ 3 | 2 | 0.44 | 26 | 5.76 | 28 | 6.21 |
| ພໍໃຈຈ່າຍໃນມູນຄ່າ 4 | 7 | 1.55 | 10 | 2.22 | 17 | 3.77 |
| ພໍໃຈຈ່າຍໃນມູນຄ່າ 5 | 131 | 29.05 | 64 | 14.19 | 195 | 43.24 |
| ພໍໃຈຈ່າຍໃນມູນຄ່າ 6 | 27 | 5.99 | 34 | 7.54 | 61 | 13.53 |
| ພໍໃຈຈ່າຍໃນມູນຄ່າ 7 | 6 | 1.33 | 16 | 3.55 | 22 | 4.88 |
| ພໍໃຈຈ່າຍໃນມູນຄ່າ 8 | 9 | 2.00 | 41 | 9.09 | 50 | 11.09 |
| ພໍໃຈຈ່າຍໃນມູນຄ່າ 9 | 3 | 0.67 | 19 | 4.21 | 22 | 4.88 |
| ພໍໃຈຈ່າຍໃນມູນຄ່າ 10 | 9 | 2.00 | 29 | 6.43 | 38 | 8.43 |
| ພໍໃຈຈ່າຍໃນມູນຄ່າ 12 | 1 | 0.22 | 0 | - | 1 | 0.22 |
| ພໍໃຈຈ່າຍໃນມູນຄ່າ 15 | 1 | 0.22 | 0 | - | 1 | 0.22 |
| ພໍໃຈຈ່າຍໃນມູນຄ່າ 30 | 1 | 0.22 | 0 | - | 1 | 0.22 |
| ລວມ | 198 | 43.90 | 253 | 56.10 | 451 | 100 |
| ຄ່າສະເລ່ຍ | | 5.75 | | 6.1 | | 5.96 |
| ຄ່າຜິດດ່ຽງມາດຕະຖານ | | 2.37 | | 2.56 | | 2.48 |

ເຫັນວ່າ ຄ່າສະເລ່ຍຂອງຄວາມເຕັມໃຈຈ່າຍໃນພາບລວມເທົ່າກັບ 5.96 ໂດລາສະຫະລັດ ແຕ່ເມື່ອແຍກລະຫວ່າງນັກທ່ອງທ່ຽວຊາວອາຊີ ແລະ ບໍ່ແມ່ນອາຊີແລ້ວເຫັນວ່າ ນັກທ່ອງທ່ຽວທີ່ບໍ່ແມ່ນອາຊີຈະມີຄວາມຍິນດີຈ່າຍຫຼາຍກວ່າ ຄື 6.10 ໂດລາສະຫະລັດ ຕໍ່ 5.75 ໂດລາສະຫະລັດ ເຊິ່ງກໍ່ມີຄວາມສອດຄ່ອງກັບມູນຄ່າບັດທີ່ໄດ້ສອບຖາມເຖິງຄວາມຍິນດີຈ່າຍຂອງນັກທ່ອງທ່ຽວທີ່ສ່ວນໃຫຍ່ທັງຊາວອາຊີ ແລະ ບໍ່ແມ່ນອາຊີເລືອກທີ່ຈະຈ່າຍໃນມູນຄ່າລະຫວ່າງ 5-6 ໂດລາສະຫະລັດ ເຊິ່ງມີເກືອບຫຼາຍກວ່າ 56 % ເມື່ອທຽບກັບມູນຄ່າຕ່າງໆທີ່ນັກທ່ອງທ່ຽວມີຄວາມຍິນດີທີ່ຈະຈ່າຍ.

ຜົນການທົດສອບປັດໄຈສ່ວນບຸກຄົນ ແລະ ປັດໄຈດ້ານພຶດຕິກຳຂອງນັກທ່ອງທ່ຽວທີ່ມາທ່ຽວຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມຜາສາດຫີນວັດພູຈຳປາສັກ

ຕາຕະລາງ 2 ປຽບທຽບປັດໄຈສ່ວນບຸກຄົນ ແລະ ປັດໄຈພຶດຕິກຳຂອງນັກທ່ອງທ່ຽວຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມຜາສາດຫີນວັດພູຈຳປາສັກ

| ປັດໄຈທີ່ມີຜົນຕໍ່ຄວາມເຕັມໃຈຈ່າຍຂອງນັກທ່ອງທ່ຽວ | ຄວາມເຕັມໃຈຈ່າຍຂອງນັກທ່ອງທ່ຽວ | | |
|---|---|---|---|
| | ອາຊີ | ບໍ່ແມ່ນອາຊີ | ລວມ |
| **ປັດໄຈສ່ວນບຸກຄົນ** | | | |
| 1. ເພດ | 0.19 | 0.67 | 0.64 |
| 2. ອາຍຸ | 0.00* | 0.02 | 0.00* |
| 3. ສະຖານະພາບ | 0.00* | 0.45 | 0.10 |
| 4. ອາຊີບ | 0.00* | 0.11 | 0.00* |
| 5. ລາຍໄດ້ | 0.00* | 0.74 | 0.00* |
| 6. ລະດັບການສຶກສາ | 0.32 | 0.10 | 0.27 |
| **ປັດໄຈດ້ານພຶດຕິກຳ** | | | |
| 1. ປະສົບການທ່ອງທ່ຽວແຫຼ່ງມໍລະດົກໂລກ | 0.01* | 0.16 | 0.47 |
| 2. ວັດພູເປັນສະຖານທີ່ທ່ອງທ່ຽວມໍລະດົກໂລກ | 0.00* | 0.09* | 0.00* |
| 3. ຈຸດປະສົງຫຼັກໃນການທ່ອງທ່ຽວ | 0.00* | 0.67 | 0.32 |
| 4. ເວລາທີ່ໃຊ້ໃນການທ່ອງທ່ຽວວັດພູ | 0.00* | 0.19 | 0.16 |
| 5. ຈຸດໝາຍປາຍທາງອື່ນ | 0.01* | 0.01* | 0.00* |

ຈາກຕາຕະລາງ ສະແດງຜົນການທົດສອບປັດໄຈສ່ວນບຸກຄົນ ແລະ ປັດໄຈດ້ານພຶດຕິກຳຂອງນັກທ່ອງທ່ຽວທີ່ມາທ່ຽວຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ດັ່ງກ່າວເຫັນວ່າ:

ປັດໄຈສ່ວນບຸກຄົນດ້ານ ອາຍຸ, ອາຊີບ ແລະ ລາຍໄດ້ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນມີຄວາມແຕກຕ່າງກັນ, ມີພຽງປັດໄຈດ້ານອາຊີບ ແລະ ລາຍໄດ້ ເມື່ອເບິ່ງໄປທີ່ກຸ່ມນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີແມ່ນມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກບໍ່ແຕກຕ່າງກັນ, ຂະນະທີ່ປັດໄຈດ້ານເພດ ແລະ ລະດັບການສຶກສາ ຂອງນັກທ່ອງທ່ຽວທັງສອງກຸ່ມມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກບໍ່ແຕກຕ່າງກັນ

ສ່ວນປັດໄຈດ້ານພຶດຕິກຳພົບວ່າ :

ປັດໄຈດ້ານປະສົບການທ່ອງທ່ຽວແຫຼ່ງມໍລະດົກໂລກອື່ນ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນບໍ່ມີຄວາມແຕກຕ່າງກັນ.

ປັດໄຈດ້ານວັດພູເປັນສະຖານທີ່ທ່ອງທ່ຽວມໍລະດົກໂລກຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນມີຄວາມແຕກຕ່າງກັນ

ປັດໄຈດ້ານຈຸດປະສົງຫຼັກໃນການມາທ່ອງທ່ຽວ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນບໍ່ມີຄວາມແຕກຕ່າງກັນ, ເມື່ອເບິ່ງໄປທີ່ກຸ່ມນັກທ່ອງທ່ຽວທີ່ແມ່ນຊາວອາຊີແມ່ນມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກແຕກຕ່າງກັນ

ປັດໄຈດ້ານເວລາທີ່ໃຊ້ໃນການທ່ອງທ່ຽວວັດພູ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນບໍ່ມີຄວາມແຕກຕ່າງກັນ, ເມື່ອເບິ່ງໄປທີ່ກຸ່ມນັກທ່ອງທ່ຽວທີ່ແມ່ນຊາວອາຊີແມ່ນມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກແຕກຕ່າງກັນ

ປັດໄຈດ້ານຈຸດໝາຍປາຍທາງອື່ນ ຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ແມ່ນມີຄວາມແຕກຕ່າງກັນ.

**ສະຫຼຸບແລະ ຂໍ້ສະເໜີ**

ການສຶກສາພຶດຕິກຳ ແລະ ຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວມໍລະດົກໂລກ ຜາສາດຫີນວັດພູຈຳປາສັກ ຂອງນັກທ່ອງທ່ຽວຕ່າງຊາດ ໃນຄັ້ງນີ້ ເປັນການສຶກສາເຊີງສຳຫຼວດ ໂດຍມີຈຸດປະສົງເພື່ອສຶກສາພຶດຕິກຳຂອງນັກທ່ອງທ່ຽວຊາວຕ່າງຊາດ ທີ່ເດີນທາງເຂົ້າມາທ່ຽວຊົມສະຖານທີ່ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ແລະ ລະດັບຄວາມເຕັມໃຈຈ່າຍຄ່າທຳນຽມໃນການເຂົ້າຊົມສະຖານທີ່ທ່ອງທ່ຽວ ມໍລະດົກໂລກ ຜາສາດຫີນ ວັດພູຈຳປາສັກ ຂອງນັກທ່ອງທ່ຽວຊາວຕ່າງຊາດ ໂດຍໃຊ້ກຸ່ມຕົວຢ່າງທີ່ເປັນນັກທ່ອງທ່ຽວຕ່າງຊາດ ຈຳນວນ 451 ຄົນ ( Taro Yamane,1976) ຜົນການສຶກສາເຫັນວ່າ ກຸ່ມຕົວຢ່າງສ່ວນໃຫຍ່ເປັນເພດຊາຍ ກວມ 51.88 % ໃນນັ້ນມາຈາກອາຊີ 23.28 %, ອາຍຸຢູ່ໃນເກນລະຫວ່າງ 20-30 ປີ ຄິດເປັນ 35.92 % ໃນນັ້ນເປັນຊາວອາຊີ 11.53 %, ມີສະຖານະພາບໂສດ ເປັນສ່ວນໃຫຍ່ 72.50 % ໃນນັ້ນມີຊາວອາຊີ 36.59 %, ສ່ວນຫຼາຍແມ່ນນັກສຶກສາ 46.12 % ໃນນັ້ນເປັນຊາວອາຊີ 31.49 %, ສ່ວນດ້ານລາຍໄດ້ສະເລ່ຍຕໍ່ເດືອນສ່ວນຫຼາຍແມ່ນ ຕໍ່າກວ່າ 1,000 ໂດລາ ກວມ 58.09 % ໃນນັ້ນເປັນຊາວອາຊີ 33.26 % ແລະ ມີລະດັບການສຶກສາ ປະລິນຍາຕີ 44.79 % ໃນນັ້ນຊາວອາຊີ 31.26 %

ຜົນການວິເຄາະພຶດຕິກຳຂອງນັກທ່ອງທ່ຽວ ເຫັນວ່າພຶດຕິກຳໃນດ້ານລົດນິຍົມຂອງການເດີນທາງຂອງນັກທ່ອງທ່ຽວອາຊີ ແລະ ບໍ່ແມ່ນອາຊີ ສ່ວນໃຫຍ່ແມ່ນມີຄວາມໃກ້ຄຽງກັນ ໃນເລື່ອງຄວາມນິຍົມການທ່ອງທ່ຽວທາງທຳມະຊາດເປັນສ່ວນໃຫຍ່ ໃນຂະນະທີ່ຈຸດປະສົງຂອງການເດີນທາງ ແມ່ນມີຄວາມແຕກຕ່າງກັນ ໂດຍທີ່ນັກທ່ອງທ່ຽວທີ່ເປັນຊາວອາຊີມີຈຸດປະສົງອື່ນທີ່ບໍ່ແມ່ນການພັກຜ່ອນ ຄືກັບນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ, ທາງດ້ານເວລາໃນການເດີນທາງທ່ອງທ່ຽວໃນແຂວງຈຳປາສັກ ເຫັນວ່ານັກທ່ອງທ່ຽວຊາວອາຊີໃຊ້ເວລາຫຼາຍກວ່ານັກທ່ອງທ່ຽວທີ່ບໍ່ແມ່ນອາຊີ ( 4-6 ວັນ ຕໍ່ 1-3 ວັນ ) ສ່ວນການໃຊ້ເວລາໃນການທ່ຽວຊົມວັດພູ ເຫັນວ່າ ສ່ວນຫຼາຍທັງນັກທ່ອງທ່ຽວຊາວອາຊີ ແລະ ບໍ່ແມ່ນອາຊີ ໃຊ້ເວລາປະມານ 1-2 ຊົ່ວໂມງ ເປັນສ່ວນໃຫຍ່, ສຳລັບຄວາມຄິດເຫັນໃນການຕັດສິນໃຈເລືອກມາທ່ຽວວັດພູຈຳປາສັກຍ້ອນວ່າວັດພູຈຳປາສັກເປັນມໍລະດົກໂລກ ໂດຍການວັດຄ່າສະເລ່ຍຄວາມຄິດເຫັນ ເຫັນວ່ານັກທ່ອງທ່ຽວຊາວອາຊີມີຄວາມຄິດເຫັນຢູ່ໃນລະດັບຕ່າງກັນ ໂດຍທີ່ຊາວອາຊີມີຄວາມຄິດເຫັນຢູ່ໃນລະດັບປານກາງເປັນສ່ວນໃຫຍ່ ( 25.06 % ), ໃນຂະນະທີ່ ນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ ພັດມີຄວາມຄິດເຫັນຢູ່ໃນລະດັບຫຼາຍ ( 30.06 % ) ແລະ ຖ້າເບິ່ງທີ່ຄ່າສະເລ່ຍກໍ່ເຫັນວ່າ ຄ່າສະເລ່ຍຄວາມຄິດເຫັນຂອງນັກທ່ອງທ່ຽວຊາວອາຊີ ມີພຽງ $\bar{X}$=3.41 ສ່ວນນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ ມີຄ່າສະເລ່ຍ $\bar{X}$= 3.73 ລະດັບຄວາມປະທັບໃຈພາຍຫຼັງການທ່ຽວຊົມວັດພູຈຳປາສັກຂອງນັກທ່ອງທ່ຽວຊາວອາຊີ ແມ່ນຢູ່ໃນລະດັບຕ່າງກັນ ໂດຍທີ່ນັກທ່ອງທ່ຽວທີ່ເປັນຊາວອາຊີມີຄ່າສະເລ່ຍຂອງຄວາມປະທັບໃຈຢູ່ທີ່ $\bar{X}$=3.31 ໃນຂະນະທີ່ນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີ ມີລະດັບຄວາມປະທັບໃຈຫຼາຍກວ່າ ໂດຍມີຄ່າສະເລ່ຍຢູ່ທີ່ $\bar{X}$=3.81, ໃນດ້ານຂອງຄວາມເຕັມໃຈຈ່າຍຄ່າເຂົ້າຊົມວັດພູຈຳປາສັກ ຂອງນັກທ່ອງທ່ຽວທີ່ບໍ່ແມ່ນຊາວອາຊີຈະມີຄວາມຍິນດີຈ່າຍຫຼາຍກວ່ານັກທ່ອງທ່ຽວຊາວອາຊີ ຄື 6.10 ໂດລາສະຫະລັດ ຕໍ່ 5.75 ໂດລາສະຫະລັດ

ຜົນການທົດສອບປັດໄຈສ່ວນບຸກຄົນ ແລະ ປັດໄຈດ້ານພຶດຕິກຳຂອງນັກທ່ອງທ່ຽວທີ່ມາທ່ຽວຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມເຫັນວ່າ: ປັດໄຈສ່ວນບຸກຄົນດ້ານອາຍຸ, ອາຊີບ ແລະ ລາຍໄດ້ ແມ່ນມີຄວາມແຕກຕ່າງກັນຕໍ່ກັບຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກ ຂະນະທີ່ປັດໄຈດ້ານເພດ ແລະ ລະດັບການສຶກສາ ຂອງທັງສອງກຸ່ມ ແມ່ນມີຄວາມເຕັມໃຈຈ່າຍຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວຜາສາດຫີນວັດພູຈຳປາສັກບໍ່ແຕກຕ່າງກັນ, ສຳລັບປັດໄຈດ້ານພຶດຕິກຳ ເຫັນວ່າ ປັດໄຈດ້ານຄວາມເປັນມໍລະດົກໂລກ ແລະ ຈຸດໝາຍປາຍທາງອື່ນໃນການເດີນທາງທ່ອງທ່ຽວ ຕໍ່ກັບຄວາມເຕັມໃຈຈ່າຍໃນການເຂົ້າຊົມຂອງທັງສອງກຸ່ມນັກທ່ອງທ່ຽວແມ່ນມີຄວາມແຕກຕ່າງກັນ, ສ່ວນປັດໄຈພຶດຕິກຳດ້ານປະສົບການທ່ອງທ່ຽວແຫຼ່ງມໍລະດົກໂລກອື່ນ, ຈຸດປະສົງຫຼັກໃນການມາທ່ອງທ່ຽວ, ເວລາທີ່ໃຊ້ໃນການທ່ອງທ່ຽວວັດພູ ຕໍ່ກັບຄວາມເຕັມໃຈຈ່າຍໃນການເຂົ້າຊົມໃນພາບລວມ ແມ່ນບໍ່ມີຄວາມແຕກຕ່າງກັນ

**ຄວາມຮູ້ບຸນຄຸນ**

ທີມງານຜູ້ສຶກສາຂໍສະແດງຄວາມຮູ້ບຸນຄຸນມາຍັງ ໂຄງການ SHEP ທີ່ໄດ້ໃຫ້ການຊ່ວຍເຫຼືອສະໜັບສະໜູນດ້ານທຶນຮອນໃນການວິໄຈໃນຄັ້ງນີ້, ຂໍສະແດງຄວາມຮູ້ບຸນຄຸນມາຍັງມະຫາວິທະຍາໄລ ຈຳປາສັກ ກໍ່ຄືຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ທີ່ໄດ້ໃຫ້ຄວາມຊ່ວຍເຫຼືອໃນການຕີພິມນຳສະເໜີຜົນຂອງການຄົ້ນຄວ້າວິໄຈຄັ້ງນີ້ອອກສູ່ສັງຄົມໄດ້ຮັບຮູ້, ອີກເທື່ອໜຶ່ງກໍ່ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງຄະນະນຳຂອງມະຫາວິທະຍາໄລ ຈຳປາສັກ ທີ່ໄດ້ໃຫ້ການຊຸກຍູ້ສົ່ງເສີມແກ່ພວກຂ້າພະເຈົ້າ ກໍ່ຄືພະນັກງານຄູ-ອາຈານຂອງມະຫາວິທະຍາໄລ ຈຳປາສັກ ໃນການຄົ້ນຄວ້າວິໄຈ ກໍ່ຄືພັດທະນາທາງດ້ານວິຊາການຕ່າງໆຕະຫຼອດມາ.

**ເອກະສານອ້າງອີງ**

ໂກເມກ ສຸກນະພາໂສດ (2011) ພຶດຕິກຳ ແລະ ຄວາມເຕັມໃຈຈ່າຍຄ່າທຳນຽມ ການເຂົ້າຊົມອຸທະຍານແຫ່ງຊາດ ສຸໂຂໄທ ຂອງນັກທ່ອງທ່ຽວຕ່າງຊາດ, ໜ້າ 18.

ບົດສະຫຼຸບ 5 ປີ ຂອງຫ້ອງການ ການເງິນເມືອງ ເມືອງຈຳປາສັກ. ລາຍຮັບຈາກການໃຫ້ບໍລິການຂອງສະຖານມໍລະດົກໂລກ ຜາສາດຫີນວັດພູ ຈຳປາສັກ ສົກປີ 2009-2013.

ພະແນກທ່ອງທ່ຽວແຂວງຈຳປາສັກ (2010) ແຜນຍຸດທະສາດການທ່ອງທ່ຽວແຂວງຈຳປາສັກ 2011-2020 ໜ້າ 21.

ຮຽນະພາ ບຸບພະຣິດ (2006). Willingness to Pay of Tourists for Dugong (*Dugong dugon*) Conservation in Had Chao Mai National Park and Ko Libong Non-hunting Area, Trang Province 2006 .

ໜັງສືພິມ ວຽງຈັນໃໝ່: ແຫຼ່ງທ່ອງທ່ຽວມີບົດບາດໃນການພັດທະນາເສດຖະກິດ 26/04/2013 (ອອນໄລ), ເຂົ້າເຖິງຈາກ: http://www.vientianemai.net/teen/khao/1/9190. ຄົ້ນພົບເມື່ອວັນທີ: 15/03/2014

Hanemann (1984, 1989) Welfare evaluation in Contingent Valuation Experiments with Discrete Response Data: Replay (ອອນໄລ), ເຂົ້າເຖິງຈາກ: http://ebookbrow see.net/ hanemann-1989-pdf-d61531207 ຄົ້ນພົບເມື່ອວັນທີ: 17 / 03 /2014

Khodchaporn Sukchitpinyo, Kanchana Chokethaworn Vol 1. No .(12012) ຄວາມເຕັມໃຈຈ່າຍຂອງນັກທ່ອງທ່ຽວໃນການອະນຸລັກແຫຼ່ງທ່ອງທ່ຽວບູຮານສະຖານວຽງກຸມກາມ. May – Aug .

Robert–jan Mora and bas kleot: Digital forensic Sampling / Taro Yamane 1976. (ອອນໄລ), ເຂົ້າເຖິງຈາກ: http://www.e-bookspdf.org/view/ ຄົ້ນພົບເມື່ອວັນທີ: 19/03/2014.